ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເລກທີ: 003 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 15 ມັງກອນ 2018

ສຳນັກງານ ຄຄຊ
ລົງເລກ
69
ວັນທີ 18 JAN 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງສປປລາວ
## ປະຈຳອາທິດທີ 25-29/12/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

**I. ວຽກງານການເມືອງແນວຄິດ**

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ,ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍແລະຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນແລະພາຍນອກເປັນຢ່າງດີ.

**II. ການເຄື່ອນໄຫວວຽກງານວິຊາສະເພາະ**

**1. ສະພາບເສດຖະກິດເງິນຕາສາກົນ**

**1.1 ອັດຕາແລກປ່ຽນສາກົນ**

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,13% ທຽບເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ. ອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກ ຫຼຸດລົງມາຢູ່ທີ່ 122,1 ຈຸດ ຂອງເດືອນ 12/2017 ຈາກ 128,6 ຈຸດ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການຕໍ່ເນື່ອງ ເພີ່ມຂຶ້ນເປັນ 1.943.000 ຄົນ ຂອງອາທິດທີ 16/12/2017 ຈາກ 1.936.000 ຄົນ ໃນອາທິດຜ່ານມາ .

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 18-22/12/2017 | ອາທິດນີ້ 25-29/12/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1847 | 1,1983 | -1,13% |
| ເຢນ/ໂດລາ | 113,34 | 112,58 | 0,68% |
| ບາດ/ໂດລາ | 32,74 | 32,56 | 0,55% |
| ເປໂຊ/ໂດລາ | 50,12 | 49,82 | 0,60% |
| ຣູເປີຍ/ໂດລາ | 13.560 | 13.565,00 | -0,04% |
| ໂດລາສິງກະໂປ/ໂດລາ | 1,3444 | 1,3356 | 0,66% |
| ຢວນ/ໂດລາ | 6,5727 | 6,5050 | 1,04% |

**1.2 ສະພາບລາຄານ້ຳມັນ ແລະຄຳໃນຕະຫຼາດໂລກ**

- ລາຄານ້ຳມັນເພີ່ມຂຶ້ນ 2,88% ຈາກ 58,08 ໂດລາ/ບາເຣວ ມາເປັນ 59,75 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາສືບຕໍ່ຫຼຸດລົງຕື່ມອີກມາເປັນ 4,61 ລ້ານບາເຣວ ຂອງອາທິດທີ 22/12/2017 ພາຍຫຼັງຫຼຸດລົງ 6,60 ລ້ານບາເລວ ໃນອາທິດຜ່ານມາ.

- ສຳລັບລາຄາຄຳເພີ່ມຂຶ້ນ 2,24% ຈາກ 1.267,92 ໂດລາ/ອອນ ມາເປັນ 1.296,36 ໂດລາ/ອອນ ເນື່ອງຈາກການອ່ອນຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນຫຼຸດຜ່ອນການຖືຄອງເງິນໂດລາ, ແລ້ວຫັນມາລົງທຶນເຂົ້າໃນການຊື້ຄຳ ແລະ ສັນຍາຊື້-ຂາຍຄຳເພີ່ມຂຶ້ນ. ໃນນີ້, ກອງທຶນ SPDR ໄດ້ຊື້ຄຳ ຈຳນວນ 1,48 ໂຕນ (ຊຶ່ງມາຮອດວັນທີ 22/12/2017, ກອງທຶນ SPDR ຖືຄອງຄຳມີຈຳນວນ 837,50 ໂຕນ, ເພີ່ມຂຶ້ນຈາກ 836,02 ໂຕນ ໃນວັນທີ 21/12/2017).

## 2.ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,10% ແລະ ແຂງຄ່າຂຶ້ນ 0,003% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບແຂງຄ່າຂຶ້ນ 0,34% ທຽບໃສ່ສະກຸນເງິນໂດລາ ແຕ່ອ່ອນຄ່າລົງ 8,34% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 18-22/12/2017 | | | ອາທິດນີ້ 25-29/12/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.300,53 | 8.333,83 | 8.315,56 | 8.295,61 | 8.319,44 | 8.307,26 | 0,06% | 0,17% | 0,10% | 0,25% | 0,42% | 0,34% |
| ບາດ | 254,70 | 256,70 | 255,94 | 254,75 | 256,62 | 255,93 | -0,02% | 0,03% | 0,003% | -8,30% | -8,38% | -8,34% |

### 2.2 ສະພາບຖານເງິນຕາແລະປະລິມານເງິນM2

- ຖານເງິນຕາປະຈຳອາທິດນີ້ຫຼຸດລົງ 2,14% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 14,54%;
- ປະລິມານເງິນ M2 ຫຼຸດລົງ 0,12% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 11,94%.

### 2.3ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (22-28/12/2017) ເຫັນວ່າ ທທກ ຊື້ໂດລາສຸດທິ 10,85 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 40,20 ລ້ານໂດລາ ແລະ ຂາຍໂດລາໄດ້ 29,35 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 361,27 ລ້ານບາດ (ໃນນີ້ຊື້ບາດໄດ້ 204,66 ລ້ານບາດ ແລະ ຂາຍບາດໄດ້ 565,93 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າເງິນໂດລາຫຼຸດລົງ 26,07% ແລະ ເງິນບາດຫຼຸດລົງ 40,23%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດຈຳນວນ 3,10 ລ້ານໂດລາ ແຕ່ເງິນບາດ ບໍ່ມີການຊື້-ຂາຍ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 12,95 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 137,50 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆໃນອາທິດນີ້ເຫັນວ່າບໍ່ມີການຊື້-ຂາຍ.

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 15-21/12/2017 | | ອາທິດນີ້ 22-28/12/2017 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1,ການຊື້ເງິນຕາຕ່າງປະເທດ | **61,72** | **249,00** | **40,20** | **204,66** | **-34,87%** | **-17,81%** |
| - ທ/ຄທຸລະກິດລັດ | 23,65 | 53,06 | 13,06 | 119,37 | -44,78% | 124,97% |
| - ທ/ຄທຸລະກິດອື່ນໆ | 38,07 | 195,94 | 27,14 | 85,29 | -28,71% | -56,47% |
| 2. ການຂາຍເງິນຕາຕ່າງປະເທດ | **32,35** | **1.040,33** | **29,35** | **565,93** | **-9,27%** | **-45,60%** |
| - ທ/ຄທຸລະກິດລັດ | 17,12 | 331,05 | 16,10 | 127,97 | -5,96% | -61,34% |
| - ທ/ຄທຸລະກິດອື່ນໆ | 15,23 | 709,28 | 13,25 | 437,96 | -13,00% | -38,25% |
| ຊື້-ຂາຍສຸດທິທທກ | **29,37** | **-791,33** | **10,85** | **-361,27** | **-63,06%** | **-54,35%** |
| - ຜົດດ່ຽງຊື້-ຂາຍ | 47,59% | -317,80% | 26,99% | -176,52% | -43,29% | -44,46% |
| - ມູນຄ່າການຊື້-ຂາຍ | **94,07** | **1.289,33** | **69,55** | **770,59** | **-26,07%** | **-40,23%** |
| 3.ການຊື້-ຂາຍລະຫວ່າງທຫລກັບ ທທກ | **13,00** | **0,00** | **-3,10** | **0,00** | | |
| - ທຫລຊື້ຈາກທທກ | 13,00 | 0,00 | 0,00 | 0,00 | | |
| - ທຫລຂາຍໃຫ້ທທກ | 0,00 | 0,00 | 3,10 | 0,00 | | |
| 4.ຊື້-ຂາຍລະຫວ່າງທທກດ້ວຍກັນ | **12,95** | **137,50** | **12,95** | **137,50** | | |
| 5.ທຫລກັບ ພາກສ່ວນອື່ນໆ | **0,00** | **0,00** | **0,00** | **0,00** | | |
| -ທຫລຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |

## 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 01/2018 ຄາດວ່າຈະຢູ່ໃນລະດັບ -0,81% (ຕົວເລກຄາດຄະເນ).

## 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະການສົ່ງເສີມນຳໃຊ້ເງິນກີບ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດໃນອາທິດນີ້ຫຼຸດລົງ 68,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 19,38 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 71,8% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 52,57 ລ້ານໂດລາສະຫະລັດທຽບເທົ່າ.

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງສປປລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 1.242 ສະບັບ ທຽບໃສ່ອາທິດຜ່ານມາຫຼຸດລົງ56 ສະບັບ ເທົ່າກັບ 4,31% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 490,38 ຕື້ກີບ ທຽບໃສ່ອາທິດຜ່ານມາຫຼຸດລົງ 103,40ຕື້ກີບ ເທົ່າກັບ 17,41% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (22-28/12/2017) ມີທັງໝົດ 4.313 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 4.020 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເພີ່ມຂຶ້ນ 906,19 ຕື້ກີບ ຈາກ 976,73 ຕື້ກີບ ມາເປັນ 1.882,92 ຕື້ກີບ ເທົ່າກັບ 92,77%;
- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 293 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າເພີ່ມຂຶ້ນ 99,16 ຕື້ກີບ ຈາກ 47,93 ຕື້ກີບ ມາເປັນ 147,09 ຕື້ກີບ.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 998,39 ຈຸດ ຫຼຸດລົງ 0,67% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 43.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 88,31 ລ້ານກວ່າກີບ ຫຼຸດລົງ 84,07% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 72,15% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 21-25/12/2017 | ດັດຊະນີອາທິດທີ 25-29/12/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.005,09 | 998,39 | -0,67 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ(LSX)** (ຫົວໜ່ວຍມູນຄ່າ 1.000ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການ ຊື້-ຂາຍ (ກີບ) | ລາຄາ ສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວມະຫາຊົນ | 34.500 | 192.005.000 | 5.565 | 1.000 | 5.660.000 | 5.660 | -97,10 | -97,05 | 95 |
| ບໍລິສັດຜະລິດໄຟຟ້າລາວມະຫາຊົນ | 61.700 | 292.655.000 | 4.743 | 2.000 | 9.500.000 | 4.750 | -96,76 | -96,75 | 7 |
| ບໍລິສັດລາວເວີນມະຫາຊົນ | - | - | 3.500 | 500 | 1.925.000 | 3.500 | - | - | - |
| ບໍລິສັດປີໂຕລ້ຽມເທລດດິ້ງລາວມະຫາຊົນ | - | - | 2.100 | 9.700 | 20.250.000 | 2.100 | - | - | - |
| ບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ | - | - | 2.950 | 400 | 1.180.000 | 2.950 | - | - | - |
| ບໍລິສັດພູສີກໍ່ສ້າງມະຫາຊົນ | 30.800 | 49.355.000 | 1.602 | 31.100 | 49.795.000 | 1.601 | 0,97 | 0,89 | -1 |
| ທັງໝົດ | 127.000 | 534.015.000 | | 43.800 | 88.310.000 | | -65,51 | -84,07 | |

## 3. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສຳເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ, ສຳມະນາ ແລະ ພິທີຕ່າງໆ:** ❶ ກອງປະຊຸມລະດັບຮອງລັດຖະມົນຕີກະຊວງການເງິນ ແລະ ຮອງຜູ້ວ່າການທະນາຄານກາງ ອາຊຽນ+3 ທີ່ (ປະເທດຍີ່ປຸ່ນ); ❷ ກອງປະຊຸມສາມຝ່າຍ ເພື່ອສະຫຼຸບວຽກງານການຮ່ວມມື ປະຈຳປີ 2017 ທີ່ (ຫ້ອງການ DGRV); ❸ ກອງປະຊຸມກ່ຽວກັບການເຜີຍແຜ່ແຜນແມ່ບົດ ແລະ ການຈັດຕັ້ງປະຕິບັດການພັດທະນາການຄຸ້ມຄອງທະນາຄານທຸລະກິດ ຕາມມາດຕະຖານບາເຊວ ແຕ່ປີ 2017-2025 ທີ່ (ກທປ); ❹ ກອງປະຊຸມລັດຖະບານສະໄໝສາມັນ ປະຈຳເດືອນ ທັນວາ 2017 ທີ່ (ຫສນຍ); ❺ ກອງປະຊຸມສະພາບໍລິຫານກອງທຶນຫຼຸດຜ່ອນຄວາມທຸກຍາກ ທີ່ (ໂຮງແຮມແລນມາກ); ❻ ກອງປະຊຸມແນະນຳການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ປະຈຳປີ 2018 ທີ່ (ຫ້ອງປະຊຸມແຫ່ງຊາດ); ❼ ກອງປະຊຸມປຶກສາຫາລືກ່ຽວກັບແບບພິມລາຍງານຂໍ້ມູນເງິນຝາກຂອງກອງທຶນປົກປ້ອງຜູ້ຝາກ

ເງິນ ທີ່ (ກທປ); ❽ ພິທີປະຖະກາຖາ ຫົວຂໍ້: "ລະລຶກວັນສາກົນລຶບລ້າງການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ 25 ພະຈິກ 2017" ທີ່ (ສທຄ) ແລະ ❾ ຝຶກອົບຮົມວຽກງານກວດກາໃຫ້ພະນັກງານຂະແໜງການທະນາຄານ ຄັ້ງທີ 9 ປີ 2017 ທີ່ (ທຫລ ພາກໃຕ້ແຂວງຈຳປາສັກ);

- ສຳເລັດການເຮັດວຽກຮ່ວມກັບບໍລິສັດ Union Pay ໃນການປັບປຸງຖ່າຍການນຳໃຊ້ຊຸດ Middleware ແລະ ກວດກາລະບົບ LAPS ປະຈຳໄຕມາດ IV;
- ຕ້ອນຮັບການເຂົ້າຢ້ຽມຍາມພົບປະຄະນະຜູ້ອຳນວຍການ ທຫລ: ❶ ຜູ້ອຳນວຍການໃຫຍ່ຄົນໃໝ່ຂອງທະນາຄານ ເອຊີລີດາ ລາວ ຈຳກັດ ທີ່ (ທຫລ) ແລະ ❷ ຈັດຕັ້ງພິທີອວຍພອນຄະນະຜູ້ອຳນວຍການ ທຫລ ເນື່ອງໃນໂອກາດສົ່ງທ້າຍປີເກົ່າຕ້ອນຮັບປີໃໝ່ສາກົນ ປະຈຳປີ 2018 ທີ່ (ທຫລ);
- ຄະນະຜູ້ອຳນວຍການ ທຫລ ພ້ອມດ້ວຍບັນດາກົມສຳເລັດການໄປກວດສຸຂະພາບປະຈຳປີ 2017 ທີ່ ສສ. ທາງດ່ວນ.

III.<u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ; ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທີ່ອລະບົບ;
- ສືບຕໍ່ຄົ້ນຄວ້າກ່ຽວກັບ: ❶ ມາດຕະຖານສາກົນດ້ານການລາຍງານການເງິນ IFRS ສະບັບ IAS 12 ອາກອນລາຍໄດ້, IAS 17 ສັນຍາເຊົ່າ ແລະ IAS 19 ຜົນປະໂຫຍດຂອງພະນັກງານ; ❷ ການສ້າງຮ່າງຂໍ້ຕົກລົງວ່າດ້ວຍລະບົບການໂອນເງິນຍ່ອຍ (ACH); ❸ ລັດຖະບັນຍັດ ກ່ຽວກັບການຍົກເວັ້ນຄ່າທຳນຽມ ແລະ ຄ່າບໍລິການໃນຂົງເຂດວຽກງານຫຼັກຊັບ ແລະ ❹ ນະໂຍບາຍກ່ຽວກັບການຍົກເວັ້ນຄ່າທຳນຽມ 0,3% ຂອງລັດຖະບານ ໃຫ້ແກ່ຜູ້ສ້າງສະພາບຄ່ອງໃນຕະຫຼາດຫຼັກຊັບລາວ (Market Maker);
- **ກະກຽມຈັດກອງປະຊຸມ:** ❶ ກອງປະຊຸມກ່ຽວກັບການຜ່ານແຜນຈັດຕັ້ງປະຕິບັດການເຂົ້າເຖິງການບໍລິການທາງດ້ານການເງິນ ສຳລັບ ສປປ ລາວ ປີ 2016-2020 ແລະ ❷ ກອງປະຊຸມຮ່ວມກັບ ສາຂາພາກ ທຫລ ກ່ຽວກັບວຽກງານຄຸ້ມຄອງ-ກວດກາ ປະຈຳປີ 2017.

ຫົວໜ້າຫ້ອງການ

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ